สำนักงาน ฅฅฆ
เลกที 1036
วันที 19 SEP 2017
โทละสับ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ຫໍພະນາຄານແຫ່ງ ສ.ປ.ປ.ລາວ
ເລກທີ: 1878
ວັນທີ: 19/9/17
ໂທລະສັບ: 243710

4448

ເລກທີ............/ຫກ

ນະຄອນຫຼວງວຽງຈັນ, ວັນທີ 13 ກັນຍາ 2017

## ແຈ້ງການ

ຮຽນ: - ທ່ານ ຫົວໜ້າຫ້ອງການ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ.
- ທ່ານ ຫົວໜ້າຫ້ອງວ່າການປົກຄອງບັນດາແຂວງ, ນະຄອນຫຼວງ.
- ບັນດາທ່ານ, ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ ແລະ ບັນດາທ່ານຜູ້ປະກອບການໃນ ຂອບເຂດທົ່ວປະເທດ.

ເລື່ອງ: ການເປີດນຳໃຊ້ໂທລະສັບສາຍດ່ວນ ຂອງກະຊວງສຶກສາທິການ ແລະ ກິລາ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 67/ ນຍ, ລົງວັນທີ 03 ກຸມພາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານສາຍດ່ວນຂອງກະຊວງສຶກສາທິການ ແລະ ກິລາສະບັບເລກທີ 4352/ສສກ, ລົງວັນທີ 31 ສິງຫາ 2017.

ຫ້ອງການກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ກະຊວງສຶກສາທິການ ແລະ ກິລາ ໄດ້ເປີດນຳໃຊ້ໂທລະສັບສາຍດ່ວນໝາຍເລກ **1520** ເພື່ອຮັບເອົາຄຳຖາມ, ຄຳສະເໜີ ແລະ ຂໍ້ຄິດເຫັນ ຈາກອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ, ນິຕິບຸກຄົນ, ບຸກຄົນ ແລະ ອື່ນໆ (ໃນໂມງລັດຖະການ) ຕໍ່ການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດຂອງກະຊວງສຶກສາທິການ ແລະ ກິລາ ໃນຂອບເຂດທົ່ວປະເທດເຊິ່ງຈະເປີດນຳໃຊ້ຢ່າງເປັນທາງການເລີ່ມແຕ່ວັນທີ 15 ກັນຍາ 2017 ເປັນຕົ້ນໄປ. ກະຊວງສຶກສາທິການ ແລະ ກິລາ ຈະເຜີຍແຜ່ຄຳຊີ້ແຈ້ງຕໍ່ບັນດາຄຳຖາມໂດຍຜ່ານໜັງສືພິມສຶກສາ ແລະ ກິລາ ແລະ ລາຍການໂທລະພາບສຶກສາຄາໃຈ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ນິສະໝອນ ສິດທິຣາດວົງສາ

ສົ່ງເພື່ອເລຂາທິການ ຄະນະຜູ້ວ່າການ
ພິຈາລະນາ
ບີນກົມ (ຫຼຸງທົ່ງ)

19/9

ພັດສະຖາພອນ ແກ້ວວົງວິຈິດ